ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມສ່ວຍສາອາກອນ

ເລກທີ: 2607 /ກງ.ກສອ

ນະຄອນຫຼວງວຽງຈັນ, ວັນທີ: 25 JUN 2019

**ເຖິງ:** ຫົວໜ້າສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ກ່ຽວກັບ ແຮ່ທາດສົ່ງອອກ.

- ອີງຕາມ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018 ;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 02/ນຍ, ລົງວັນທີ 01 ກຸມພາ 2018, ວ່າດ້ວຍການປັບປຸງລະບຽບການ ແລະ ກົນໄກປະສານງານໃນການດຳເນີນທຸລະກິດ;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 2834/ກງ,ລົງວັນທີ 22 ສິງຫາ 2017, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມສ່ວຍສາອາກອນ.

ເພື່ອເປັນສ້າງເງື່ອນໄຂ ອຳນວຍຄວາມສະດວກໃນການດຳເນີນທຸລະກິດຢູ່ ສປປ ລາວ ແລະ ຈັດຕັ້ງປະຕິບັດການຄຸ້ມຄອງເກັບລາຍຮັບສ່ວຍສາອາກອນເຂົ້າງົບປະມານແຫ່ງລັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

**ຫົວໜ້າກົມສ່ວຍສາອາກອນ ອອກແຈ້ງການ:**

1. ມອບໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ບັງຄັບໃຊ້ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ສະບັບປັບປຸງ) ເລກທີ48/ສພຊ, ລົງວັນທີ 20 ມິຖຸນາ 2018 ໃນການຄຸ້ມຄອງເກັບອາກອນມູນຄ່າເພີ່ມ ຈາກການສົ່ງອອກແຮ່ທາດ ໄປຕ່າງປະເທດ ໃນອັດຕາ 0% ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂໍ້ 2 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມຢ່າງເຂັ້ມງວດ;
2. ໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ເກັບກຳ ແລະ ສະຫຼຸບສັງລວມ ຂໍ້ມູນການສົ່ງອອກແຮ່ທາດເປັນແຕ່ລະວິສາຫະກິດ ຕາມເອກະສານອະນຸຍາດສົ່ງອອກແຮ່ຂອງພາກສ່ວນທີ່ກ່ຽວຂ້ອງ ພາຍຫຼັງທີ່ວິສາຫະກິດໄດ້ເສຍຄ່າຊັບພະຍາກອນທຳມະຊາດ ແລ້ວ ສົ່ງໃຫ້ກົມສ່ວຍສາອາກອນ ທຸກໆ 3 ເດືອນ ເພື່ອເປັນຂໍ້ມູນສົ່ງໃຫ້ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງ ບ່ອນທີ່ວິສາຫະກິດຂຶ້ນກັບການຄຸ້ມຄອງ ເພື່ອເກັບອາກອນປະເພດຕ່າງໆໃຫ້ຖືກຕ້ອງຄົບຖ້ວນ ຕາມລະບຽບກົດໝາຍ;
3. ມອບໃຫ້ ສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ, ໃນການຈັດຕັ້ງປະຕິບັດ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານກົມສ່ວຍສາອາກອນ ເພື່ອຫາວິທີແກ້ໄຂໃຫ້ທັນການ;
4. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຫົວໜ້າກົມສ່ວຍສາອາກອນ

ພູທະນູເພັດ ໄຊສົມບັດ